# BIÊN BẢN GHI NHỚ

## HỢP TÁC ĐÀO TẠO VÀ NGHIÊN CỨU KHOA HỌC
## GIỮA
## ĐẠI HỌC CHĂMPASẮC – LÀO VÀ ĐẠI HỌC NHA TRANG – VIỆT NAM

**Đại diện Đại học Champasak**:

| | |
|---|---|
| TS. Sikhamtath Mitaray | - Hiệu Trưởng |
| Ths. Buakeo Soutthichac | - Phó Hiệu Trưởng |
| TS. Phetsamay Vilaphet | - Trưởng khoa nông nghiệp |

**Đại diện Đại học Nha trang**

| | |
|---|---|
| PGS. TS. Nguyễn văn Ba | - Phó Hiệu Trưởng |
| Ths. Hồ Thành Sơn | - Trưởng phòng kế hoạch – Tài chính |
| Ths. Võ Ngọc Thám | - Trưởng Bộ môn Nuôi cá nước ngọt |
| Ths. Nguyễn Đình Trung | - Phó Trưởng Bộ môn Môi trường&Nguồn lợi |

Trên tinh thần bản thoả thuận ghi nhớ hợp tác này chúng tôi rất vui mừng đã được đón tiếp đoàn trường Đại học Nha Trang đến khảo sát điều kiện tự nhiên môi trường tại trường Đại học Chămpasắc.

**Các lĩnh vực có thể liên kết hợp tác**

**I. Đào tạo:**

- Đại học Nha Trang tặng một số thiết bị và hoá chất cho trường Đại học Chămpasắc.
- Đại học Nha Trang và Đại học Chămpasắc hợp tác trong việc lập Dự án xây dựng trại nuôi cá nước ngọt
- Đại học Chămpasắc có thể cử cán bộ sang đào tạo về mặt chuyên môn, liên kết nghiên cứu tại Đại học Nha trang
- Đại học Nha trang đào tạo, bồi dưỡng giáo viên cho Đại học Chămpasắc đối với một số chuyên ngành phù hợp.
- Đại học Nha trang sẽ hỗ trợ kinh phí trong việc đào tạo cán bộ trình độ thạc sĩ, tiến sĩ cho giảng viên của Đại học Chămpasắc.

**II. Nghiên cứu khoa học:**

Hai trường có thể hợp tác nghiên cứu khoa học thuộc các lĩnh vực:

- Các lĩnh vực về nuôi cá nước ngọt, kinh tế, tài chính, du lịch, ….
- Đại học Chămpasắc mời các giáo viên khoa Nuôi Trồng thuỷ sản của trường Đại học Nha Trang đến thăm và làm việc với các giáo viên khoa nông học của Đại học Chămpasắc.

**III. Các lĩnh vực khác:**

- Trao đổi thông tin và giao lưu nhân các sự kiện về hợp tác hữu nghị Việt - Lào.
- Đoàn đại biểu Đại học Nha Trang đồng ý xin mời đoàn đại biểu của Đại học Chămpasắc đến thăm và làm việc tại Đại học Nha Trang vào thời gian thích hợp.

**Đại diện Đại học Champasak**
**PHó Giám đốc**

**Ths. Buakeo Soutthichac**

Ngày: 04/04/2007

**Đại diện Đại học Nha Trang**
**Phó Hiệu trưởng**

BỘ GIÁO DỤC ĐÀO TẠO
TRƯỜNG ĐẠI HỌC NHA TRANG

**PGS. TS. Nguyễn Văn Ba**

Ngày: 04/04/2007

# ບົດບັນທຶກການປຶກສາຫາລື
## ການຮ່ວມມືກໍ່ສ້າງ ແລະ ຄົ້ນຄ້ວາວິທະຍາສາດ
## ລະຫວ່າງ
## ມະຫາວິທະຍາໄລ ຈຳປາສັກ ສ ປ ປ ລ
## ແລະ
## ມະຫາວິທະຍາໄລ ຍາຈາງ ສ.ສ ຫວຽດນາມ

- ຕາງໜ້າ ມະຫາວິທະຍາໄລ ຈຳປາສັກ:

ທ່ານ ດຣ. ສີດຳຕາດ ມີຕາໄລ, ອະທິການບໍດີ ມະຫາວິທະຍາໄລ ຈຳປາສັກ.

ທ່ານ ບົວແກ້ວ ສຸດທິຈັກ, ຮອງ ອະທິການບໍດີ ມະຫາວິທະຍາໄລ ຈຳປາສັກ.

ທ່ານ ດຣ. ເພັດສະໃໝ ວິຣະເພັດ, ຫົວໜ້າຄະນະກະເສດສາດ ມະຫາວິທະຍາໄລ ຈຳປາສັກ.

- ຕາງໜ້າ ມະຫາວິທະຍາໄລ ຍາຈາງ :

ທ່ານ ຣສຈ. ດຣ. ຫງຽນວັນບາ, ຮອງ ອະທິການບໍດີ ມະຫາວິທະຍາໄລ ຍາຈາງ.

ທ່ານ ໂຮ່ແທງເຊີນ, ຫົວໜ້າ ຫ້ອງການແຜນການ-ການເງິນ ມະຫາວິທະຍາໄລ ຍາຈາງ.

ທ່ານ ວໍ້ ທາງອກທາມ, ຫົວໜ້າຫ້ອງການວິຊາການລ້ຽງປານ້ຳຈືດ

ທ່ານ ຫງຽນດິງຈຸງ, ຮອງຫົວໜ້າຫ້ອງການພາກວິຊາສິ່ງແວດລ້ອມແລະແຫຼ່ງຜົນປະໂຫຍດ

ບົນຈິດໃຈກອງປະຊຸມການປຶກສາຫາລືນີ້ ພວກຂ້າພະເຈົ້າສຸດທີ່ພາກພູມໃຈ ທີ່ໄດ້ຕ້ອງຮັບ ຄະນະຜູ້ແທນຈາກ ມະຫາວິທະຍາໄລຍາຈາງ ມາສຳຫຼວດກວດກາເງື່ອນໄຂສິ່ງແວດລ້ອມ ກ່ຽວກັບການລ້ຽງປານ້ຳຈືດຢູ່ ມະຫາວິທະຍາໄລ ຈຳປາສັກ.

### ທັງສອງຝ່າຍໄດ້ຕົກລົງເຫັນດີຮ່ວມມືກັນດັ່ງນີ້:

### I. ດ້ານການກໍ່ສ້າງບຸກຄະລາກອນ:

- ມະຫາວິທະຍາໄລ ຍາຈາງ ໄດ້ມອບອຸປະກອນແລະທາດເຄມີຈຳນວນໜຶ່ງໃຫ້ແກ່ມະຫາວິທະຍາໄລ ຈຳປາສັກ.
- ມະຫາວິທະຍາໄລ ຍາຈາງ ແລະ ມະຫາວິທະຍາໄລ ຈຳປາສັກ ໄດ້ຕົກລົງເຫັນດີໃນການກໍ່ສ້າງໂຄງການສູນລ້ຽງປານ້ຳຈືດ.
- ມະຫາວິທະຍາໄລ ຈຳປາສັກ ເຫັນດີຈະສົ່ງພະນັກງານໄປກໍ່ສ້າງດ້ານວິຊາສະເພາະ, ຮ່ວມມືຄົ້ນຄ້ວາ ຢູ່ທີ່ ມະຫາວິທະຍາໄລ ຍາຈາງ
- ມະຫາວິທະຍາໄລ ຍາຈາງ ຈະກໍ່ສ້າງຝຶກອົບຮົມ, ພະນັກງານຄູ-ອາຈານ ໃຫ້ແກ່ ມະຫາວິທະຍາໄລຈຳປາສັກ ໃນບາງສາຂາວິຊາທີ່ເໝາະສົມ.
- ມະຫາວິທະຍາໄລ ຍາຈາງ ເຫັນດີຈະຊ່ວຍພັດທະນາ ແລະ ຍົກລະດັບ ໃຫ້ແກ່ ຄູ-ອາຈານ ມະຫາວິທະຍາໄລ ຈຳປາສັກ. ຮຽນຕໍ່ລະດັບປະລິນຍາໂທ, ປະລິນຍາເອກ.

### II. ດ້ານການຄົ້ນຄວ້າວິທະຍາສາດ:

ທັງສອງ ມະຫາວິທະຍາໄລ ເຫັນດີຈະຮ່ວມມືຄົ້ນຄວ້າວິທະຍາສາດໃນຂະແໜງຕ່າງໆດັ່ງນີ້:

- ບັນດາຂົງເຂດກ່ຽວກັບການລ້ຽງປານ້ຳຈືດ, ເສດຖະກິດ, ການເງິນ, ທ່ອງທ່ຽວ ແລະ ອື່ນໆ.

ມະຫາວິທະຍາໄລ ຈຳປາສັກ ສະເໜີເຊີນ ຄູ-ອາຈານ ຄະນະການປະມົງ ມະຫາວິທະຍາໄລ ຍາຈາງ , ມາຢ້ຽມຢາມປຶກສາຫາລື ແລະ ຖອດຖອນບົດຮຽນ ກັບ ຄະນະກະເສດສາດ ຂອງ ມະຫາວິທະຍາໄລ ຈຳປາສັກ.

**III. ດ້ານກິດຈະກຳ:**

- ເຮັດກິດຈະກຳພົບປະສ້າງສັນຮ່ວມກັນເພື່ອຮັດແໜ້ນຄວາມສາມັກຄີ ມິດຕະພາບ ລາວ-ຫວຽດນາມ.
- ຄະນະນຳຂອງ ມະຫາວິທະຍາໄລ ຍາຈາງ ເຫັນດີຈະເຊື້ອເຊີນຄະນະນຳຂອງ ມະຫາວິທະຍາໄລ ຈຳປາສັກ ໄປຢ້ຽມຢາມ ແລະ ເຮັດວຽກຢູ່ ມະຫາວິທະຍາໄລ ຍາຈາງ ຕາມເວລາອັນເໝາະສົມ.

**ຕາງໜ້າ ມະຫາວິທະຍາໄລ ຈຳປາສັກ**
**ຮອງອະທິການບໍດີ**

**ບົວແກ້ວ ສຸທິຈັກ**
**ວັນທີ 04/04/2007**

**ຕາງໜ້າ ມະຫາວິທະຍາໄລ ຍາຈາງ**
**ຮອງອະທິການບໍດີ**

BỘ GIÁO DỤC VÀ ĐÀO TẠO
TRƯỜNG ĐẠI HỌC NHA TRANG

**ຮສຈ. ດຣ. ຫງຽນ ວັນ ບາ**
**ວັນທີ 04/04/2007**